# ທົບທວນຕີລາຄາການຈັດຕັ້ງປະຕິບັດ ການຄຸ້ມຄອງດ້ານການເງິນ ບັນດາໂຄງການ/ແຜນງານທີ່ນຳໃຊ້ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າ ຈາກຕ່າງປະເທດ ປະຈຳປີ 2020

ທ່ານ ສຸລິວັດ ສຸວັນນະຈູມຄຳ
ຫົວໜ້າກົມການເງິນຕ່າງປະເທດ ແລະຄຸ້ມຄອງໜີ້ສິນ, ກະຊວງການເງິນ

ນະຄອນຫຼວງວຽງຈັນ, ວັນທີ 25 ກຸມພາ 2021

# ເນື້ອໃນບົດສະເໜີ

I. ສະພາບການຈັດຕັ້ງປະຕິບັດ ປະຈໍາປີ 2020

II. ທິດທາງແຜນການ ປະຈໍາປີ 2021

III. ຂໍ້ສະເໜີ

# I. ສະພາບການຈັດຕັ້ງປະຕິບັດ ປະຈຳປີ 2020

ແຜນງານ/ໂຄງການ ທີ່ກຳລັງຈັດຕັ້ງປະຕິບັດ ແລະ ດຳເນີນການເບີກຖອນເງິນ ຜ່ານກະຊວງການເງິນ ທັງໝົດມີ 135 ໂຄງການ/ແຜນງານ



# I. ສະພາບການຈັດຕັ້ງປະຕິບັດ ປະຈຳປີ 2020 (ຕໍ່)

**ແຜນການນຳໃຊ້ທຶນທັງໝົດ ຈຳນວນ 715,33 ລ້ານ ໂດລາ ສຫລ ແລະ ໄດ້ສະເໜີເບີກຖອນ ຈຳນວນ 801,16 ລ້ານ ໂດລາ ສຫລ (112 % ຂອງແຜນປີ)**

- ເບີກຖອນ (ເງິນກູ້) ປະຕິບັດໄດ້ 707,69 ລ້ານ ໂດລາ ສຫລ ທຽບເທົ່າ 109,10%
- ເບີກຖອນ (ຊ່ວຍເຫຼືອລ້າ) ໄດ້ 93,47 ລ້ານ ໂດລາ ສຫລ ທຽບເທົ່າ 140,21%
- ການປະຕິບັດຕົວເລກເກີນແຜນການຄາດຄະເນແມ່ນອີງຕາມຄວາມຄືບໜ້າຂອງກິດຈະກຳຂອງໂຄງການທີ່ສາມາດປະຕິບັດຕົວຈິງໄດ້ສຳເລັດ ແລະ ຕາມການສະເໜີຂໍເບີກຈ່າຍເງິນຂອງຂະແໜງການ ເນື່ອງຈາກ ການຂຶ້ນແຜນເປັນການຄາດຄະເນ, ເຊິ່ງໃນແຕ່ລະປີ ກະຊວງການເງິນ ກໍໄດ້ສົ່ງໜັງສືໃຫ້ບັນດາຂະແໜງການກ່ຽວຂ້ອງ ເພື່ອສັງລວມແຜນການເບີກຈ່າຍເງິນຂອງບັນດາໂຄງການທີ່ນຳໃຊ້ທຶນກູ້ຢືມ ແລະຊ່ວຍເຫຼືອລ້າໃຫ້ກະຊວງການເງິນ;
- ແຜນງານດັດແກ້ມະຫາພາກ ບໍ່ໄດ້ປະຕິບັດ ແລະ ໄດ້ເລື່ອນອອກໄປ ຍ້ອນສະພາບຂອງການລະບາດຂອງໂຄວິດ-19, ເຮັດໃຫ້ມີຜົນກະທົບຕໍ່ເສດຖະກິດມະຫາພາກ ແລະ ບໍ່ບັນລຸຕາມຕາມເງື່ອນໄຂການປະເມີນຂອງຜູ້ໃຫ້ທຶນ. ມີພຽງການຊ່ວຍເຫຼືອຂອງ ສະຫະພາບເອີຣົບ ທີ່ຍັງກຳລັງຈັດຕັ້ງປະຕິບັດ ແຕ່ກໍມີຄວາມຫຼ້າຊ້າ.

# I. ສະພາບການຈັດຕັ້ງປະຕິບັດ ປະຈໍາປີ 2020 (ຕໍ່)






# ນໍາໃຊ້ທຶນໂຄງການແບ່ງຕາມຂະແໜງການ (135 ໂຄງການ/ແຜນງານ)



# I. ສະພາບການຈັດຕັ້ງປະຕິບັດ ປະຈຳປີ 2020 (ຕໍ່)

- **ການປະຕິບັດນະໂຍບາຍດ້ານພາສີ-ອາກອນ ແລະ ຄ່າທຳນຽມຕ່າງໆ** ສຳລັບການນຳເຂົ້າວັດຖຸອຸປະກອນ ແລະ ພາຫະນະຕ່າງໆຂອງໂຄງການເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດ, ການສະໜອງການຊ່ວຍເຫຼືອລ້າຈາກຕ່າງປະເທດ ໃນຮູບແບບອື່ນໆ ເຊັ່ນ ການບໍລິຈາກ (donation), ຕີກເປັນມູນຄ່າ:
  - ບ້ວງຊ່ວຍເຫຼືອລ້າ : 73,45 ລ້ານ ໂດລາ ສຫລ; 0,94 ລ້ານ ເອີໂຣ; 134,45 ລ້ານເຢັນ; 1,79 ລ້ານ ຢວນ; 25,28 ລ້ານດົງ; 3,75 ລ້ານ ບາດ ແລະ 6.663 ລ້ານ ກີບ;
  - ບ້ວງເງິນກູ້ຢືມ: 363,85 ລ້ານ ໂດລາ ສຫລ; 489,87 ລ້ານ ບາດ ແລະ 2.882 ລ້ານ ກີບ;

- **ການປະຕິບັດພັນທະອາກອນ** ແມ່ນອີງໃສ່ກົດໝາຍກ່ຽວຂ້ອງຂອງ ສປປ ລາວ ເປັນຫຼັກ ໂດຍມີຄວາມສອດຄ່ອງກັບສັນຍາການຮ່ວມມື, ສັນຍາການສະໜອງທຶນ ຫຼື ສົນທິສັນຍາ ທີ່ລັດຖະບານໄດ້ເຊັນຮ່ວມກັບຕ່າງປະເທດ, ເຊິ່ງການຈັດຕັ້ງປະຕິບັດ ແມ່ນໄດ້ລະບຸໃນຂໍ້ຕົກລົງຂອງກະຊວງການເງິນ ສະບັບເລກທີ 2695/ກງ. ແຕ່ເນື່ອງຈາກວ່າ ຍັງມີຫຼາຍຜູ້ໃຫ້ທຶນສອງຝ່າຍ ບໍ່ຍິນຍອມທີ່ຈະໃຫ້ນຳໃຊ້ເງິນຊ່ວຍເຫຼືອລ້າຂອງເຂົາເຈົ້າ ເພື່ອປະຕິບັດພັນທະອາກອນ, ພ້ອມນັ້ນ ທຶນສົມທົບຂອງລັດຖະບານທີ່ຂະແໜງການໄດ້ຂຶ້ນໄວ້ ກໍບໍ່ພຽງພໍ ແລະ ມີບັນຫາຫຍຸ້ງຍາກໃນການຈັດຮັບ-ຈັດຈ່າຍ. ບົນພື້ນຖານການສະເໜີຂອງກະຊວງການເງິນ, ສະພາແຫ່ງຊາດ ແລະ ສຳນັກງານນາຍົກລັດຖະມົນໄດ້ ມີແຈ້ງການສະບັບເລກທີ 348/ຄສລ, ກຜງສ ລົງວັນທີ 13 ພະຈິກ 2020 ແລະ ເລກທີ 1285/ຫສນຍ, ລົງວັນທີ 23 ພະຈິກ 2020 ວ່າດ້ວຍການຍົກເວັ້ນພາສີ-ອາກອນ ແລະ ຄ່າທຳນຽມ ໃຫ້ແກ່ຜູ້ຮັບເໝົາ ແລະ ຊ່ຽວຊານ ທີ່ຮັບໃຊ້ໂຄງການທຶນຊ່ວຍເຫຼືອລ້າຈາກຕ່າງປະເທດ ໃນຂອບການຮ່ວມມືສອງຝ່າຍ.

# ຂໍ້ສະດວກ

- ມີລະບຽບການທີ່ເປັນບ່ອນອີງໃນການຈັດຕັ້ງປະຕິບັດ:
  - ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017;
  - ກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສາທາລະນະ ສະບັບເລກທີ 46/ສພຊ, ລົງວັນທີ 18 ມິຖຸນາ 2018;
  - ດຳລັດ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ ຊ.ກ.ພ, ສະບັບເລກທີ 357/ນຍ, ລົງວັນທີ 09 ຕຸລາ 2019;
  - ຂໍ້ຕົກລົງ ຂອງລັດຖະມົນຕີວ່າການກະຊວງການເງິນ ວ່າດ້ວຍລະບຽບການການຄຸ້ມຄອງດ້ານການເງິນ ແລະ ນຳໃຊ້ທຶນຊ່ວຍເຫຼືອທາງການ ເພື່ອການພັດທະນາ, ສະບັບເລກທີ 2695/ກງ, ລົງວັນທີ 01 ພະຈິກ 2010;
  - ຂໍ້ຕົກລົງ ວ່າດ້ວຍກຳນົດໝາຍໃຊ້ຈ່າຍງົບປະມານແຫ່ງລັດ ສະບັບເລກທີ 4000/ກງ, ລົງວັນທີ 12 ທັນວາ 2018;
  - ຄຳແນະນຳ ວ່າດ້ວຍການປະບັດນະໂຍບາຍພາສີ-ອາກອນ, ສະບັບເລກທີ 2560/ກງ, ລົງວັນທີ 09 ສິງຫາ 2016;
  - ບັນດາກົດໝາຍ ແລະ ລະບຽບອື່ນໆຂອງ ສປປ ລາວ ແລະ ຜູ້ໃຫ້ທຶນ;
- ມີການຊີ້ນຳ-ນຳພາຂອງຄະນະນຳຂອງຂະແໜງການ ແລະ ທ້ອງຖິ່ນຢ່າງໃກ້ສິດ, ມີຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບສູງໃນການຄຸ້ມຄອງ, ຕິດຕາມ ແລະ ຊຸກຍູ້;

# ຂໍ້ສະດວກ (ຕໍ່)

- ມີການຕິດຕາມ ແລະ ຊ່ວຍແນະນຳດ້ານວິຊາການຈາກອົງການຂັ້ນມະຫາພາກ.
- ໂຄງການໄດ້ສຸມທຸກຄວາມພະຍາຍາມ ເພື່ອຈັດຈັ້ງປະຕິບັດວຽກງານຂອງຕົນໃຫ້ມີຄວາມຄ່ອງຕົວ.
- ໂຄງການໄດ້ເປັນເຈົ້າການທົບທວນການຈັດຕັ້ງປະຕິບັດວຽກງານຂອງຕົນເປັນແຕ່ລະໄລຍະ ຮ່ວມກັບຜູ້ໃຫ້ທຶນ ກໍຄື ພາກສ່ວນກ່ຽວຂ້ອງ.
- ການຄຸ້ມຄອງການເງິນເປັນລະບົບດີ ແລະ ນຳໃຊ້ເງິນຖືກຕາມເປົ້າໝາຍ ແລະ ລະບຽບການຂອງໂຄງການ. ການເບີກຖອນເງິນຈາກບັນຊີຜູ້ໃຫ້ທຶນໂດຍກົງ ເພື່ອນຳໃຊ້ເຂົ້າໃນກິດຈະກຳຕ່າງໆຂອງໂຄງການ ກໍໄປຕາມແຜນການປີ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ.
- ໂຄງການໄດ້ປະກອບສ່ວນຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງປະຕິບັດພັນທະອາກອນ ແລະ ຄ່າທຳນຽມຕ່າງໆ ຕາມລະບຽບກົດໝາຍເຫັນວ່າ ມີບາດກ້າວດີຂຶ້ນເລື້ອຍໆ.
- ການດຳເນີນວຽກງານຈັດຊື້-ຈັດຈ້າງ ແມ່ນປະຕິບັດຕາມລະບຽບຂອງ ສປປ ລາວ ແລະ ລະບຽບຂອງຜູ້ໃຫ້ທຶນ. ມີການຈັດເຝິກອົບຮົມດ້ານການເງິນ-ການຈັດຊື້ຮ່ວມກັບຜູ້ໃຫ້ທຶນ ແລະ ພາຍໃນໂຄງການເອງຢ່າງເປັນປົກກະຕິ.
- ບາງສະຖາບັນການເງິນສາກົນ (WB, ADB, IFAD) ເລີ່ມນຳໃຊ້ລະບົບການເບີກຖອນອີເລັກໂທຼນິກ (e-disbursement) ເຮັດໃຫ້ການເບີກຖອນເງິນ ມີຄວາມວ່ອງໄວຂຶ້ນ.
- ໄດ້ມີການປະສານສົມທົບຢ່າງໃກ້ສິດ ລະຫວ່າງ ກະຊວງການເງິນ, ຂະແໜງການ, ໂຄງການ ແລະພາກສ່ວນທີ່ກ່ຽວຂ້ອງການຈັດຕັ້ງປະຕິບັດໂຄງການ.

# ຂໍ້ຄົງຄ້າງ

- ການຂໍເປີດບັນຊີສະເພາະ, ການປະກອບເອກະສານຂໍເບີກຖອນເງິນ ກໍຍັງສືບຕໍ່ມີບັນຫາ ພາໃຫ້ມີຄວາມຊັກຊ້າ (ເອກະສານຜິດ ຫຼື ບໍ່ຄົບຖ້ວນ) ຫຼື ເລັ່ງດ່ວນເກີນໄປ (ໃກ້ຮອດກໍານົດແລ້ວຈັ່ງຍື່ນເອກະສານ). ຍັງສືບຕໍ່ມີບັນຫາການຂໍດັດແກ້ສັນຍາເງິນກູ້ຢືມ ຫຼື ຊ່ວຍເຫຼືອລ້າ (ເຊັ່ນ ດັດແກ້ຮ່ວງລາຍຈ່າຍ, ການຂໍຕໍ່ອາຍຸສັນຍາ). ການເປີດບັນຊີຮອງຮັບເງິນຊ່ວຍເຫຼືອລ້າຂອງບາງຂະແໜງການ ແລະຜູ້ໃຫ້ທຶນ ຍັງບໍ່ລວມສູນຜ່ານລະບົບຄັງເງິນແຫ່ງຊາດ.
- ການຂຶ້ນແຜນງົບປະມານການເບີກຈ່າຍເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ ໃນປີຜ່ານມາ ເຖິງໄດ້ສັງລວມບົນພື້ນຖານການແຈ້ງຂອງບັນດາຂະແໜງການ ກໍຄື ໂຄງການ, ແຕ່ກໍເຫັນວ່າການສະໜອງຂໍ້ມູນຍັງບໍ່ຄົບຖ້ວນ ແລະ ມີຄວາມຊັກຊ້າ ເຮັດໃຫ້ການຂຶ້ນແຜນ ຍັງມີລັກສະນະຄາດຄະເນ ແລະ ຍັງບໍ່ທັນສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງຂອງໂຄງການ.
- ການສະຫຼຸບລາຍງານດ້ານການເງິນ ແລະ ຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການ ຍັງບໍ່ທັນປະຕິບັດເປັນປົກກະຕິ. ພ້ອມນັ້ນ, ການສະຫຼຸບ ແລະ ສົມທຽບຕົວເລກການເບີກຈ່າຍຂອງກະຊວງການເງິນ ແລະບາງໂຄງການ ເຫັນວ່າຍັງມີຄວາມຄາດເຄື່ອນ ເຮັດໃຫ້ບໍ່ສາມາດຢັ້ງຢືນການສະຫຼຸບຕົວເລກການເບີກຖອນເງິນຂອງໂຄງການ ໄດ້ຢ່າງສົມບູນ, ເຊິ່ງສະພາແຫ່ງຊາດ ໄດ້ຍົກເປັນບັນຫາທີ່ຕ້ອງໄດ້ສືບຕໍ່ມີວິທີການແກ້ໄຂ.

# ຂໍ້ຄົງຄ້າງ (ຕໍ່)

- ການແຈ້ງບັນຊີຊັບສິນບັດຂອງໂຄງການ ຍັງບໍ່ເປັນປົກະຕິ ແລະ ການເຕົ້າໂຮມຊັບສິນບັດ ພາຍຫຼັງໂຄງການສິ້ນສຸດ ເພື່ອລາຍງານລັດຖະບານຕາມລະບຽບການ ເຫັນວ່າ ຍັງມີຄວາມຫຍຸ້ງຍາກ.
- ການສັງລວມຂໍ້ມູນໂຄງການທີ່ໄດ້ຮັບທຶນຊ່ວຍເຫຼືອລ້າ ໃນບາງຂະແໜງການ ຍັງບໍ່ຜ່ານລະບົບບັນຊີຂອງກະຊວງການເງິນ ຫຼື ການຕິດຕາມຂອງກະຊວງແຜນການ ແລະ ການລົງທຶນ, ເຮັດໃຫ້ການສັງລວມຕົວເລກເພື່ອສະເໜີສະພາແຫ່ງຊາດ ບໍ່ທັນສອດຄ່ອງກັບສະພາບຄວາມເປັນຈິງ.
- ການສະໜອງທຶນສົມທົບຂອງລັດຖະບານ ເຖິງແມ່ນໄດ້ຮັບການແກ້ໄຂດີຂຶ້ນ, ແຕ່ຍັງບໍ່ທັນໄດ້ຕອບສະໜອງຄົບຖ້ວນ, ມີບາງໂຄງການ ແລະ ຂະແໜງການ ຍັງບໍ່ທັນໄດ້ປະສານສົມທົບແໜ້ນກ່ຽວກັບການຂຶ້ນແຜນທຶນສົມທົບຂອງລັດຖະບານ, ຍັງມີຄວາມສັບສົນ ໃນການແບ່ງການຂຶ້ນແຜນລະຫວ່າງສູນກາງ ແລະ ທ້ອງຖິ່ນ, ພ້ອມນັ້ນ ການສະໜອງ ຫຼື ແລກປ່ຽນຂໍ້ມູນກໍຍັງບໍ່ທັນຈອດກັນ.
- ການຂຶ້ນແຜນທຶນສົມທົບ ເພື່ອປະຕິບັດພັນທະອາກອນ ກໍຍັງມີຄວາມສັບສົນໃນເວລາຈັດຕັ້ງປະຕິບັດຕົວຈິງ (ການຈິດຮັບຈິດຈ່າຍ), ເຊິ່ງຈະຕ້ອງໄດ້ສືບຕໍ່ປະສານສົມທົບຮ່ວມກັນ ເພື່ອແກ້ໄຂ.

# ຂໍ້ຄົງຄ້າງ (ຕໍ່)

- ການຈັດຊື້-ຈັດຈ້າງ ຍັງມີຫຼາຍຂັ້ນຫຼາຍຕອນ ເຊິ່ງໃຊ້ເວລາດົນສົມຄວນ, ເຮັດໃຫ້ການດໍາເນີນໂຄງການກໍມີຄວາມຊັກຊ້າ.
- ການຈັດຊື້-ຈັດຈ້າງໃນບາງໂຄງການຍັງບໍ່ທັນສອດຄ່ອງຕາມລະບຽບ ຍັງມີກໍລະນີຍັງຕ້ອງໄດ້ແກ້ໄຂໂດຍການຫຼຸດແທນຄືນຈໍານວນທີ່ດໍາເນີນຜິດລະບຽບ. ບາງໂຄງການໄດ້ກໍານົດການຍົກເວັ້ນພາສີ-ອາກອນ ໃນສັນຍາຈັດຊື້-ຈັດຈ້າງ ໂດຍບໍ່ສອດຄ່ອງກັບສັນຍາສະໜອງທຶນ ທີ່ລັດຖະບານໄດ້ເຊັນຮ່ວມກັບຜູ້ໃຫ້ທຶນ.
- ຄວາມເຂົ້າໃຈຂອງໂຄງການ ເພື່ອຊຸກຍູ້ໃຫ້ຜູ້ຮັບເໝົາ, ທີ່ປຶກສາ ແລະ ຊ່ຽວຊານ ປະຕິບັດພັນທະອາກອນ ຍັງບໍ່ທັນຊັດເຈນ, ຄົບຖ້ວນ ແລະ ບໍ່ທັນໄປຕາມກົດໝາຍອາກອນກ່ຽວຂ້ອງ. ພ້ອມກັນນັ້ນ, ບາງຜູ້ໃຫ້ທຶນ ກໍຍັງບໍ່ທັນຫັນມານໍາໃຊ້ກົດໝາຍຂອງ ສປປ ລາວ ຢ່າງຄົບຖ້ວນ.
- ການສະເໜີຂໍຍົກເວັ້ນພາສີນໍາເຂົ້າສິນຄ້າ ແລະວັດຖຸອຸປະກອນຕ່າງໆ ເຫັນວ່າ ຍັງພົບບັນຫາຄວາມຫຍຸ້ງຍາກໃນການຕິດຕາມ ແລະ ບໍ່ສອດຄ່ອງກັບລະບຽບການ 2560/ກງ, ໂດຍສະເພາະການປະກອບເອກະສານ ຍັງບໍ່ຄົບຖ້ວນ ແລະ ຍັງເປັນສະບັບສໍາເນົາ. ບາງຂະແໜງການ ຍັງອີງໃສ່ແຕ່ສັນຍາການຮ່ວມມື ທີ່ເຊັນແຕ່ດົນ ແລະ ບໍ່ມີກໍານົດ ເພື່ອສືບຕໍ່ຂໍນໍາເຂົ້າສິນຄ້າ, ໂດຍບໍ່ໄດ້ກໍານົດແຜນການນໍາເຂົ້າລະອຽດ ໃນແຕ່ລະປີ. ພ້ອມນັ້ນ, ຍັງມີຫຼາຍກໍລະນີການນໍາເຂົ້າອຸປະກອນ ແລະ ສິນຄ້າ ຫຼື ພາຫະນະ ທີ່ໄດ້ຮັບການຊ່ວຍເຫຼືອລ້າ ແມ່ນນໍາເຂົ້າກ່ອນແລ້ວ ຈຶ່ງດໍາເນີນການສະເໜີຂໍຍົກເວັ້ນ ແລະ ລຶບລ້າງເອກະສານພາສີຕາມພາຍຫຼັງ ແລະ ຍັງມີບາງກໍລະນີ ທີ່ໂຄງການສິ້ນສຸດແລ້ວ ແຕ່ຍັງມີການຂໍຢັ້ງຢືນການຍົກເວັ້ນພາສີນໍາເຂົ້າ ເພື່ອໄປລຶບລ້າງການນໍາເຂົ້າກ່ອນນັ້ນ.

# II. ທິດທາງແຜນການ ສໍາລັບປີ 2021

ໃນປີ 2021 ຄາດຄະເນຈະມີ ຈໍານວນທັງໝົດ 122 ໂຄງການ/ແຜນງານ ທີ່ຈະດໍາເນີນການເບີກຖອນເງິນຜ່ານກະຊວງການເງິນ



# II. ທິດທາງແຜນການ ສໍາລັບປີ 2021 (ຕໍ່)

- ແຜນຄາດຄະເນການນໍາໃຊ້ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າ ໃນປີ 2021 ມີມູນຄ່າທັງໝົດ 475,34 ລ້ານ ໂດລາ ສຫລ, ໃນນັ້ນ:
  - ເງິນກູ້ຢືມເປັນໂຄງການ ຈໍານວນ 402,62 ລ້ານ ໂດລາ ສຫລ;
  - ເງິນຊ່ວຍເຫຼືອລ້າເປັນໂຄງການ ຈໍານວນ 72,72 ລ້ານ ໂດລາ ສຫລ.

  ການຂຶ້ນແຜນດັ່ງກ່າວ ແມ່ນໄດ້ອີງໃສ່ການສະໜອງຂໍ້ມູນຈາກບັນດາກະຊວງການ, ຂະແໜງການ ເປັນຫຼັກ ແລະ ມີການສົມທົບຕົວເລກຮ່ວມກັບກະຊວງແຜນການ ແລະ ການລົງທຶນ ເພື່ອໃຫ້ເປັນຕົວເລກດຽວ ຜ່ານສະພາແຫ່ງຊາດອະນຸມັດ.

# ບາງທິດທາງແກ້ໄຂບັນຫາຄົງຄ້າງ

- ຈະສຸມໃສ່ການລົງຕິດຕາມ ແລະຊຸກຍູ້ການຈັດຕັ້ງປະຕິບັດການນໍາໃຊ້ທຶນກູ້ຢືມ ແລະຊ່ວຍເຫຼືອລ້າຂອງບັນດາໂຄງການທີ່ເຫັນວ່າຍັງມີບັນຫາ, ເພີ່ມທະວີໃນການປະຕິບັດຕາມລະບຽບກົດໝາຍຂອງ ສປປ ລາວ ສົມທົບກັບລະບຽບຂອງຜູ້ໃຫ້ທຶນ ຢ່າງເຂັ້ມງວດ, ໂດຍການມີສ່ວນຮ່ວມ ແລະ ປະສານສົມທົບຂອງຫຼາຍພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງເງື່ອນໄຂສະດວກໃຫ້ແກ່ການດໍາເນີນວຽກງານຂອງໂຄງການ ສໍາເລັດຕາມຄາດໝາຍທີ່ວາງໄວ້;
- ບັນດາຂະແໜງການ ແລະໂຄງການ ຕ້ອງມີຄວາມຮັບຜິດຊອບສູງ ໃນການນໍາໃຊ້ທຶນໃຫ້ຖືກເປົ້າໝາຍຕາມສັນຍາ ແລະ ຫຼີກເວັ້ນການຕົກເຮ່ຍເສຍຫາຍ, ບໍ່ດັ່ງນັ້ນ, ຈະໄດ້ທົດແທນຄືນແກ່ຜູ້ໃຫ້ທຶນ ຫຼື ອາດຖືກປະກາດການລະເມີດສັນຍາ; ພ້ອມນັ້ນ, ກໍຕ້ອງເປັນເຈົ້າການຂຶ້ນແຜນທຶນສົມທົບຂອງລັດຖະບານ ໃຫ້ທັນກັບການສ້າງແຜນງົບປະມານແຫ່ງລັດໃນແຕ່ລະປີ, ໂດຍເພີ່ມການປະສານສົມທົບຮ່ວມກັນ ເພື່ອໃຫ້ການນໍາໃຊ້ທຶນສົມທົບ ຕອບສະໜອງໄດ້ຕາມເປົ້າໝາຍ ແລະ ແຜນທີ່ວາງໄວ້;
- ເພື່ອຫຼຸດຜ່ອນການຂໍຕໍ່ອາຍຸສັນຍາ ແລະ ຂໍດັດແກ້ຮ່ວງລາຍຈ່າຍ, ເຈົ້າຂອງໂຄງການ ຕ້ອງໄດ້ເພີ່ມທະວີການຂຶ້ນແຜນວຽກ ໃຫ້ສົມຄູ່ກັບແຜນເງິນ ຕາມເງື່ອນໄຂຂອງສັນຍາ;

# ບາງທິດທາງແກ້ໄຂບັນຫາຄົງຄ້າງ (ຕໍ່)

- ສືບຕໍ່ປັບປຸງກົນໄກການປະສານງານ, ລະບົບການລາຍງານ ແລະສະໜອງຂໍ້ມູນຂ່າວສານ ເພື່ອເຮັດໃຫ້ການສະຫລູບສັງລວມການເຄື່ອນໄຫວວຽກງານ ແລະ ຕົວເລກເບີກຈ່າຍເງິນ ຖືກຕ້ອງຕາມຄວາມເປັນຈິງ. ສໍາລັບທຶນຊ່ວຍເຫຼືອລ້າຈາກຕ່າງປະເທດ ທີ່ບໍ່ຜ່ານລະບົບບັນຊີຂອງກະຊວງການເງິນ, ບັນດາຂະແໜງການ ແລະ ໂຄງການ ຕ້ອງເປັນເຈົ້າການ ແລະປະສານສົມທົບຢ່າງໃກ້ສິດກັບ 3 ພາກສ່ວນເຊັ່ນ: ກະຊວງການເງິນ, ກະຊວງແຜນການ ແລະການລົງທຶນ ແລະກະຊວງການຕ່າງປະເທດ ເພື່ອໃຫ້ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດລວມສູນເຂົ້າໃນລະບົບງົບປະມານແຫ່ງລັດ ໂດຍຜ່ານລະບົບຄັງເງິນແຫ່ງຊາດ ແລະສອດຄ່ອງກັບລະບຽບກົດໝາຍ.
- ສືບຕໍ່ການປະສານສົມທົບແໜ້ນລະຫວ່າງທຸກພາກສ່ວນທີ່ກ່ຽວຂ້ອງ ມີຄວາມເປັນເອກະພາບທົ່ວປະເທດ ກ່ຽວກັບ ພັນທະດ້ານອາກອນ ໂດຍປະຕິບັດຕາມຂໍ້ຜູກພັນຂອງສັນຍາກັບຜູ້ໃຫ້ທຶນ ແລະສອດຄ່ອງກັບກົດໝາຍວ່າດ້ວຍສ່ວຍສາອາກອນ, ເພື່ອເປັນບ່ອນອີງໃນການປູກລະດົມຂົນຂວາຍ ບັນດາຜູ້ຮັບເໝົາ, ຜູ້ສະໜອງສິນຄ້າ ແລະການບໍລິການ ປະຕິບັດພັນທະຂອງຕົນຢ່າງຖືກຕ້ອງ ແລະ ຄົບຖ້ວນ;
- ສືບຕໍ່ປະສານສົບທົບແໜ້ນໃນການລົງຕິດຕາມຊັບສົມບັດຂອງບັນດາໂຄງການທີ່ນໍາໃຊ້ທຶນກູ້ຢືມ ແລະຊ່ວຍເຫຼືອລ້າ ຈາກຕ່າງປະເທດ;

# ບາງທິດທາງແກ້ໄຂບັນຫາຄົງຄ້າງ (ຕໍ່)

- ສືບຕໍ່ປະສານສົມທົບກັບບັນດາກະຊວງ, ຂະແໜງການ ແລະ ອໍານາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການສ້າງຂີດຄວາມອາດສາມາດໃຫ້ແກ່ພະນັກງານການເງິນ-ການບັນຊີ ແລະ ຈັດຊື້/ຈັດຈ້າງຂອງໂຄງການ, ໂດຍໃຫ້ມີແຜນຈັດເຝິກອົບຮົມຢ່າງເປັນລະບົບ, ພ້ອມນັ້ນ, ຕ້ອງປັບປຸງໂຄງການຈັດຕັ້ງຂອງໂຄງການ ແລະຊັບຊ້ອນພະນັກງານ ທີ່ມີວິຊາສະເພາະສອດຄ່ອງກັບຕໍາແໜ່ງງານຕ່າງໆ, ຄຸ້ມຄອງຊ່ຽວຊານທັງພາຍໃນ ແລະຕ່າງປະເທດ ໃຫ້ເຮັດວຽກຢ່າງມີປະສິດຜົນສູງ ແລະຫຼີກລ່ຽງການສັບປ່ຽນ ແລະຍົກຍ້າຍພະນັກງານ ຢູ່ເລື້ອຍໆ.

- ນອກນັ້ນ, ກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ ຈະສືບຕໍ່ປຶກສາຫາລືກັບບັນດາກົມກ່ຽວຂ້ອງ ເພື່ອມີມາດຕະການແກ້ໄຂບັນຫາທີ່ຄົງຄ້າງ. ພ້ອມນັ້ນ, ຈະໄດ້ດໍາເນີນການປັບປຸງບັນດາລະບຽບການກ່ຽວຂ້ອງ ເຊັ່ນ ຂໍ້ຕົກລົງ 2695/ກງ ແລະ ບົດແນະນໍາ 2560/ກງ ເພື່ອໃຫ້ສອດຄ່ອງກັບບັນດາກົດໝາຍກ່ຽວຂ້ອງທີ່ມີການປັບປຸງ ແລະ ສ້າງຂຶ້ນໃໝ່, ພ້ອມທັງ ຈະກໍານົດຢ່າງລະອຽດຕື່ມໃນແຕ່ລະພາກ ແຕ່ລະຂັ້ນຕອນ ເພື່ອເພີ່ມຄວາມສະດວກ ແລະ ຄວາມເຂົ້າໃຈເປັນເອກະພາບ ໃນການຈັດຕັ້ງປະຕິບັດ.

# ຂໍ້ສະເໜີ

- ໃຫ້ມີສ່ວນຮ່ວມຂອງກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນ ນັບແຕ່ໄລຍະກະກຽມໂຄງການ. ການອອກແບບໂຄງການຕ້ອງຮັບປະກັນຄວາມມີປະສິດທິຜົນ ແລະ ຜົນໄດ້ຮັບຕໍ່ການພັດທະນາເສດຖະກິດ-ສັງຄົມ. ສໍາລັບບ້ວງເງິນກູ້ຢືມ ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ ຢ່າງເຂັ້ມງວດ.

- ແຜນການຈັດຊື້-ຈັດຈ້າງ ນອກຈາກຜ່ານຄໍາເຫັນຜູ້ໃຫ້ທຶນ, ຕ້ອງໄດ້ຜ່ານກະຊວງການເງິນ ຕາມກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ພ້ອມທັງຕ້ອງປະຕິບັດຕາມນະໂຍບາຍປະຢັດ ທີ່ລັດຖະບານວາງອອກ.

- ຂະແໜງການ/ໂຄງການ ແຈ້ງແຜນການນໍາໃຊ້ເງິນໂຄງການທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນປະຈໍາປີ ສົ່ງໃຫ້ກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ ຕາມກໍານົດເວລາ. ພ້ອມນັ້ນ, ການຂຶ້ນແຜນທຶນສົມທົບ ຕ້ອງກໍານົດຊັດເຈນ ຕາມຄໍາແນະນໍາຂອງກະຊວງແຜນການ ແລະ ການລົງທຶນ, ແລະ ທັນກັບການປະຕິບັດໂຄງການ ແລະ ການສະເໜີເຂົ້າໃນແຜນງົບປະມານແຫ່ງລັດປະຈໍາປີ ທີ່ເລີ່ມປະຕິບັດໂຄງການ.

- ສືບຕໍ່ສົ່ງບົດສະຫລຸບລາຍງານດ້ານການເງິນໂຄງການ ແລະ ການສັງລວມທຶນຊ່ວຍເຫຼືອລ້າຈາກຕ່າງປະເທດ ທີ່ບໍ່ຜ່ານລະບົບການຄຸ້ມຄອງຂອງກະຊວງການເງິນ ໃຫ້ກະຊວງການເງິນ ເພື່ອລວມສູນເຂົ້າໃນລະບົບງົບປະມານແຫ່ງລັດ.

- ການລົງຕິດຕາມ ກວດກາ ການຈັດຕັ້ງປະຕິບັດໂຄງການ ສະເໜີດໍາເນີນຮ່ວມກັນລະຫວ່າງບັນດາພາກສ່ວນກ່ຽວຂ້ອງ ຢ່າງເປັນຂະບວນການ ເພື່ອປະຢັດເວລາຂອງໂຄງການ ແລະ ຂະແໜງການທີ່ຈະໄປຮ່ວມເຮັດວຽກນໍາ, ພ້ອມທັງ ຄວາມເປັນເອກະພາບໃນການສະຫຼຸບຕີລາຄາປະສິດທິຜົນຂອງໂຄງການ. ແຕ່ງົບປະມານທີ່ຈະນໍາໃຊ້ໃນການລົງຕິດຕາມ ແມ່ນແຕ່ລະກະຊວງອາດຮັບຜິດຊອບໃຜລາວ.

# ຂໍຂອບໃຈ